ກະຊວງການເງິນ
ຂາເຂົ້າ
ເລກທີ...756
ວັນທີ 29-3-2016

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ຫ້ອງວ່າການລັດຖະບານ

ເລກທີ...478.../ຫລບ.ກລຂ.

ນະຄອນຫຼວງວຽງຈັນ, ວັນທີ...28...3...2016

# ແຈ້ງການ

ຮຽນ : - ບັນດາທ່ານລັດຖະມົນຕີວ່າການກະຊວງ-ຫົວໜ້າອົງການທຽບເທົ່າ.

- ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງໃນທົ່ວປະເທດ.

- ບັນດາທ່ານຫົວໜ້າອົງການຈັດຕັ້ງມະຫາຊົນອ້ອມຂ້າງສູນກາງ.

ເລື່ອງ : ການຈັດຕັ້ງສະເຫຼີມສະຫຼອງວັນບຸນປີໃໝ່ລາວ ປະຈຳປີ ພສ 2559.

– ອີງຕາມມາດຕາ 55 ຂອງກົດໝາຍວ່າດ້ວຍແຮງງານ, ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2014 ກ່ຽວກັບວັນພັກທາງລັດຖະການ.

– ອີງຕາມຮີດຄອງປະເພນີ ແລະ ມູນເຊື້ອອັນດີງາມຂອງຊາດລາວມາແຕ່ດົນນານ ໃນການສະເຫຼີມສະຫຼອງວັນບຸນປີໃໝ່ກຸດສົງການ.

– ອີງຕາມການຊີ້ນຳ ແລະ ຕົກລົງ ຂອງທ່ານນາຍົກລັດຖະມົນຕີ ໃນວັນທີ 25 ມີນາ 2016.

ຫ້ອງວ່າການລັດຖະບານ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານລັດຖະມົນຕີວ່າການ-ຫົວໜ້າອົງການທຽບເທົ່າ, ທ່ານເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາທ່ານເຈົ້າແຂວງ, ບັນດາຫົວໜ້າອົງການຈັດຕັ້ງມະຫາຊົນ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ໃນຂອບເຂດທົ່ວປະເທດ ຊາບ ແລະ ປະຕິບັດ ດັ່ງນີ້:

" 1). **ການສະເຫຼີມສະຫຼອງວັນບຸນປີໃໝ່ລາວ ປະຈຳປີ ພສ 2559** ເປັນປີທີ່ມີຄວາມໝາຍຄວາມສຳຄັນ ຊຶ່ງເປັນປີທີ່ທົ່ວພັກ, ທົ່ວປວງຊົນລາວທັງຊາດ ພວມອອກແຮງແຂ່ງຂັນຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII, ກະກຽມໃຫ້ແກ່ການເປີດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ VIII ແລະ ການເປັນເຈົ້າພາບກອງປະຊຸມສຸດຍອດອາຊຽນ ໃນປີ 2016 ນີ້.

2 ). ໃຫ້ຖືເອົາການສະເຫຼີມສະຫຼອງວັນບຸນປີໃໝ່ລາວ ປະຈຳປີ ພສ 2559 ທີ່ຈະໝູນວຽນມາເຖິງນີ້ເປັນໂອກາດໜຶ່ງທີ່ສຳຄັນ ໃນການສືບຕໍ່ເສີມຂະຫຍາຍມູນເຊື້ອ, ຮີດຄອງປະເພນີອັນດີງາມ ແລະ ຄວາມສາມັກຄີເປັນປຶກແຜ່ນຂອງຊາດທີ່ມີມາແຕ່ດົນນານແລ້ວ, ເປັນບຸນໃຫຍ່ປະຈຳຊາດ ທີ່ທົ່ວປວງຊົນລາວທັງຊາດ ໄດ້ຖືເອົາໂອກາດນີ້ເປັນການອວຍໄຊໃຫ້ພອນເຊິ່ງກັນ ແລະ ກັນ, ພ້ອມກັນຈັດຕັ້ງສະເຫຼີມສະຫຼອງບຸນປີໃໝ່ລາວເຮົາ ດ້ວຍບັນຍາກາດເບີກບານມ່ວນຊື່ນ, ຖືກຕ້ອງຕາມຮີດຄອງປະເພນີ ແລະ ຮັກສາໄດ້ວັດທະນາທຳອັນດີງາມຂອງຊາດ ທີ່ຕິດພັນກັບການສົ່ງເສີມການທ່ອງທ່ຽວ ບົນຈິດໃຈປະຢັດມັດທະຍັດ, ບໍ່ໃຫ້ຈັດງານລ້ຽງແບບຟຸມເຟືອຍ, ບໍ່ໃຫ້ນຳ

3). ເນື່ອງຈາກວ່າປີໃໝ່ລາວປີນີ້ແມ່ນວັນທີ 13, 14, 15 ແລະ 16 ເມສາ 2016 ( ກົງກັບວັນພຸດ, ພະຫັດ, ສຸກ ແລະ ເສົາ ) ແລະ ວັນທີ 16 ເມສາ 2016 ເປັນມື້ວັນເສົາ, ເປັນມື້ພັກວັນລັດຖະການ. ສະນັ້ນ, ຈຶ່ງຕົກລົງເຫັນດີກຳນົດເອົາວັນທີ 12 ເມສາ 2016 ( ກົງກັບວັນອັງຄານ ) ເປັນວັນພັກຊົດເຊີຍ.

4). ການສະເຫຼີມສະຫຼອງປີໃໝ່ລາວປີນີ້ ເປັນໄລຍະເວລາຍາວ. ຈຶ່ງໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ ເອົາໃຈໃສ່ຊີ້ນຳ, ຕິດຕາມ ແລະ ຄຸ້ມຄອງລາຄາສິນຄ້າໃນທ້ອງຕະຫຼາດ ບໍ່ໃຫ້ພໍ່ຄ້າຊາວຂາຍ, ຜູ້ປະກອບການ ສວຍໂອກາດຂຶ້ນລາຄາສິນຄ້າໂດຍບໍ່ມີເຫດຜົນ ພ້ອມກັນນັ້ນ, ກໍ່ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບກະຊວງທີ່ກ່ຽວຂ້ອງ ເອົາໃຈໃສ່ຊຸກຍູ້ສົ່ງເສີມການຜະລິດ,ຕິດພັນກັບການສະໜອງສິນຄ້າໃຫ້ພຽງພໍກັບຄວາມຕ້ອງການຂອງສັງຄົມ.

5). ໃຫ້ບັນດາກະຊວງ-ອົງການທຽບເທົ່າ, ນະຄອນຫຼວງ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດເອົາໃຈໃສ່ເປັນພິເສດ ຕໍ່ການຮັກສາຄວາມສະຫງົບປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ອັກຄີໄພຕ່າງໆທີ່ອາດຈະເກີດຂຶ້ນໃນລະດູແລ້ງທີ່ມີອາກາດຮ້ອນອົບເອົ້າ. ໂດຍໃຫ້ມີການແບ່ງຄວາມຮັບຜິດຊອບໃນການເວນຍາມ ແລະ ປະຈຳການຄັກແນ່ ເພື່ອປ້ອງກັນສຳນັກງານອົງການຕະຫຼອດໄລຍະປີໃໝ່ລາວ ແລະ ໃຫ້ສາມາດປະສານງານໄດ້ຢ່າງເປັນປົກກະຕິທຸກເວລາ.

- ໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການສົມທົບກັບ ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ທ້ອງຖິ່ນຕ່າງໆ ເພື່ອຈັດສັນ ແລະ ອຳນວຍຄວາມສະດວກ ໃນການສັນຈອນໄປ-ມາ, ພ້ອມທັງຮັບປະກັນຄວາມປອດໄພຕາມທ້ອງຖະໜົນ ແລະ ໃຫ້ເພີ່ມທະວີການໂຄສະນາສ້າງຈິດສຳນຶກ ໃຫ້ພົນລະເມືອງໃນທົ່ວສັງຄົມເຄົາລົບຕໍ່ກົດລະບຽບຈໍລະຈອນ ແລະ ເຂັ້ມງວດໃນການກວດກາ, ຫ້າມຂັບຂີ່ຍານພະຫະນະພາຍຫຼັງທີ່ມີການດື່ມສິ່ງມຶນເມົາ ເພື່ອປ້ອງກັນການເກີດອຸປະຕິເຫດ, ການສະເຫຼີມສະຫຼອງຫົດນ້ຳຕ້ອງຮັບປະກັນບໍ່ໃຫ້ສ້າງຄວາມເສຍຫາຍ ແລະ ບໍ່ເປັນອັນຕະລາຍຕໍ່ຊີວິດ ແລະ ຊັບສິນຂອງບຸກຄົນ ແລະ ສະຖານທີ່ສາທາລະນະຕ່າງໆ.

6). ມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ ເພີ່ມທະວີການປະຊາສຳພັນໃຫ້ປະຊາຊົນໃນທົ່ວສັງຄົມຮັບຮູ້ ແລະ ເຂົ້າໃຈ ຕໍ່ການສະເຫຼີມສະຫຼອງບຸນປີໃໝ່ປະຈຳຊາດ ໃຫ້ສອດຄ່ອງກັບວັດທະນາທຳ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ສະພາບຕົວຈິງ, ເພື່ອຮັບປະກັນຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ".

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ, ຫົວໜ້າຫ້ອງວ່າການລັດຖະບານ

ສອນໄຊ ສີພັນດອນ

ບ່ອນນຳສົ່ງ:

| | |
|---|---|
| - ນາຍົກ-ຮອງນາຍົກລັດຖະມົນຕີ | 06 ສະບັບ |
| - ຫ້ອງການສູນກາງພັກ | 01 ສະບັບ |
| - ຫ້ອງວ່າການສະພາແຫ່ງຊາດ | 01 ສະບັບ |
| - ສູນກາງແນວລາວສ້າງຊາດ | 01 ສະບັບ |
| - ອົງການຕຸລາການ | [illegible] ສະບັບ |
| - ສຳເນົາ | 10 ສະບັບ |